ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຈຳປາສັກ

ພະແນກອຸດສາຫະກຳ ແລະ ການຄ້າ

ເລກທີ 3306 /ພອຄ

ແຂວງຈຳປາສັກ, ວັນທີ 31 ສິງຫາ 2022

# ແຈ້ງການ

**ເຖິງ** : ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ດຳເນີນທຸລະກິດກ່ຽວກັບສິນຄ້າຫຸ້ມຫໍ່ໃນຂອບເຂດທົ່ວແຂວງຈຳປາສັກ.

**ເລື່ອງ** : ລະບຽບການຄຸ້ມຄອງ ແລະ ກວດສອບສິນຄ້າຫຸ້ມຫໍ່.

- ອີງຕາມ ກົດໝາຍວ່າດ້ວຍການວັດແທກສະບັບເລກທີ 36/ສພຊ, ລົງວັນທີ 13 ທັນວາ 2013.
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫຼວງວຽງຈັນ, ສະບັບເລກທີ 0273/ອຄ.ກຈພງ, ນະຄອນຫຼວງວຽງຈັນ, ລົງວັນທີ: 10 ມີນາ 2022.
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງສິນຄ້າຫຸ້ມຫໍ່ ສະບັບເລກທີ 1572/ກວຕ, ລົງວັນທີ 27 ພະຈິກ 2020.

ເພື່ອເປັນການຄຸ້ມຄອງ, ກວດສອບ ຜະລິດຕະພັນສິນຄ້າຫຸ້ມຫໍ່ທີ່ຜະລິດຢູ່ພາຍໃນ, ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍຢູ່ ແຂວງຈຳປາສັກ ໃຫ້ຖືກຕ້ອງສອດຄ່ອງ ຕາມລະບຽບການທີ່ກຳນົດໄວ້ ເພື່ອສ້າງເງື່ອນໄຂ ອັນສະດວກໃນການ ຊື້-ຂາຍ, ແນ່ໃສ່ເຮັດໃຫ້ສັງຄົມມີຄວາມຍຸຕິທຳ, ປອດໄພ, ມີຄວາມເປັນເອກະພາບໃນ ການຈັດຕັ້ງປະຕິບັດໃນຂອບເຂດທົ່ວປະເທດ.

**ຫົວໜ້າພະແນກອຸດສະຫາກຳ ແລະ ການຄ້າ ອອກແຈ້ງການດັ່ງນີ້ :**

I. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ດຳເນີນທຸລະກິດກ່ຽວກັບສິນຄ້າຫຸ້ມຫໍ່ ທຸກປະເພດ ຕາມລາຍການທີ່ໄດ້ກຳນົດໄວ້ກ່ອນຈະນຳເຂົ້າ, ສົ່ງອອກ, ຫຸ້ມຫໍ່ ແລະ ຈຳໜ່າຍຢູ່ ແຂວງຈຳປາສັກ ຕ້ອງໄດ້ໄປຍື່ນ ຄຳຮ້ອງຂໍຈົດທະບຽນ ສິນຄ້າຫຸ້ມຫໍ່ນັ້ນຕໍ່ຂະແໜງຊັບສິນທາງປັນຍາ, ມາດຕະຖານ ແລະ ວັດແທກ ພະແນກອຸດສະຫາກຳ ແລະ ການຄ້າ ຕາມແບບຟອມແລະເອກະສານດັ່ງນີ້:

1.1 ໃບຄຳຮ້ອງຂໍຈົດທະບຽນສິນຄ້າຫຸ້ມຫໍ່.

1.2 ລາຍລະອຽດກ່ຽວກັບສິນຄ້າຫຸ້ມຫໍ່ທີ່ນຳມາຈົດທະບຽນ.

1.3 ສຳເນົາເອກະສານ ທີ່ປະກອບກິດຈະການ.

1.4 ຕົວຢ່າງຜະລິດຕະພັນ ແລະ ສິນຄ້າ.

II. ການກຳນົດປະລິມານ ຂອງສິນຄ້າຫຸ້ມຫໍ່.

ການກຳນົດປະລິມານຂອງສິນຄ້າຫຸ້ມຫໍ່ ໃຫ້ປະຕິບັດ ດັ່ງນີ້:

2.1 ສິນຄ້າຫຸ້ມຫໍ່ທີ່ເປັນຂະໜາດຕ້ອງລະບຸເປັນຄວາມຍາວ.

Scanned with CamScanner

2.2 ສິນຄ້າຫຸ້ມຫໍ່ທີ່ເປັນທາດແຂງ, ເຄິ່ງແຂງ, ອາຍແກັສ ຊຶ່ງລວມມີທັງທາດແຂງ ແລະ ທາດແຫຼວປະສົມກັນ ຕ້ອງລະບຸເປັນນໍ້າໜັກ.

2.3 ປະລິມານສິນຄ້າທີ່ເປັນສະເປຕ້ອງໄດ້ລະບຸຖືກໄວ້ໃນນໍ້າໜັກ ຫຼື ຫົວໜ່ວຍບໍລິມາດ.

2.4 ສິນຄ້າຫຸ້ມຫໍ່ທີ່ເປັນທາດແຫຼວຕ້ອງລະບຸເປັນບໍລິມາດ.

2.5 ປະລິມານກໍານົດຂອງສິນຄ້າຫຸ້ມຫໍ່ ທີ່ມີປະລິມານຕົວຈິງໜ້ອຍກ່ວາ 5 ກຣາມ ( 05g ) ຫຼື 05 ມິນລີລິດ (5ml) ຫຼື 05 ມິນລີແມັດ (5mm) ແມ່ນບໍ່ຈໍາເປັນຕ້ອງລະບຸຄ່າປະລິມານຄ່າກໍານົດໃນສະຫຼາກຫຸ້ມຫໍ່, ແຕ່ຖ້າຫາກຕ້ອງການແມ່ນໃຫ້ໃສ່ຄ່າສະເລ່ຍຂອງສິນຄ້າຫຸ້ມຫໍ່ທັງໝົດຫຼາຍກ່ວາ ຫຼື ເທົ່າກັບປະລິມານຄ່າກໍານົດ.

2.6 ປະລິມານຂອງສິນຄ້າຫຸ້ມຫໍ່ໃດໜຶ່ງທີ່ປະກອບດ້ວຍຫຼາຍຫົວໜ່ວຍ ຕ້ອງໄດ້ສະແດງເປັນຕົວເລກຖ້ວນຊຶ່ງລະບຸເປັນປະລິມານ ຫຼື ຫົວໜ່ວຍນໍ້າໜັກ.

2.7 ໃນກໍລະນີສິນຄ້າຫຸ້ມຫໍ່ໃຫຍ່ປະກອບດ້ວຍຫຼາຍຫີບຫໍ່ນ້ອຍ ທີ່ບັນຈຸຫຼາຍອັນຕ້ອງໄດ້ລະບຸລາຍລະອຽດຢູ່ໃນສະຫຼາກຫຸ້ມຫໍ່.

2.8 ການກໍານົດຫົວໜ່ວຍຂອງປະລິມານແມ່ນຂຶ້ນກັບປະເພດ ແລະ ຂະໜາດຂອງປະລິມານ ທີ່ໄດ້ກໍານົດໄວ້ລະອຽດໃນຕາຕະລາງ ດັ່ງນີ້:

| ປະເພດການວັດແທກ | ບັນຈຸ | ຫົວໜ່ວຍ |
|---|---|---|
| ບໍລິມາດ | ບັນຈຸ < 1000 ml<br>1000 ml ≤ ບັນຈຸ | ml ຫຼື cl<br>ລິດ l |
| ນໍ້າໜັກ | ບັນຈຸ < 1 mg<br>1 g ≤ ບັນຈຸ < 1000 g<br>1000 g ≤ ບັນຈຸ | mg<br>g<br>kg |
| ຂະໜາດ | ບັນຈຸ < 1 mm<br>1mm ≤ ບັນຈຸ < 100 cm<br>100 cm ≤ ບັນຈຸ | µm ຫຼື mm<br>mm ຫຼື cm<br>m |
| ເນື້ອທີ່ | ບັນຈຸ < 100 $cm^2$<br>100 $mm^2$ ≤ ບັນຈຸ < 1 $m^2$<br>1 $m^2$ ≤ ບັນຈຸ | $mm^2$ ຫຼື $cm^2$<br>$cm^2$<br>$m^2$ |

III. ຮູບແບບກວດສອບສິນຄ້າຫຸ້ມຫໍ່.

ການກວດສອບສິນຄ້າຫຸ້ມຫໍ່ທີ່ມີ 3 ຮູບແບບຄື :

3.1. ກວດສອບສິນຄ້າກ່ອນນໍາເຂົ້າ, ສົ່ງອອກ, ຜະລິດ ແລະ ຈໍາໜ່າຍ

3.2. ກວດສອບຕາມແຜນປົກກະຕິ 01ຄັ້ງ/ປີ ແມ່ນການກວດກາທີ່ດໍາເນີນໄປຕາມແຜນການຢ່າງເປັນປະຈໍາ ແລະ ມີກໍານົດເວລາອັນແນ່ນອນ. ( ສໍາລັບຜະລິດຕະພັນທີ່ບໍ່ຂຶ້ນທະບຽນສິນຄ້າຫຸ້ມຫໍ່ ).

3.3. ກວດສອບແບບກະທັນຫັນ ແລະ ຕາມການຮ້ອງຂໍ ແມ່ນກວດກາໂດຍຮີບດ່ວນຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງຫນ້າ.

Scanned with CamScanner

IV. ສະຫຼາກ ແລະ ເຄື່ອງໝາຍ

4.1 ສິນຄ້າຫຸ້ມຫໍ່ທຸກປະເພດທີ່ຜະລິດບັນຈຸຫຸ້ມຫໍ່, ນຳເຂົ້າ ແລະ ຈຳໜ່າຍຢູ່ແຂວງຈຳປາສັກ ຕ້ອງມີສະຫຼາກທີ່ເປັນພາສາລາວ ເພື່ອແຈ້ງຂໍ້ມູນຕ່າງໆກ່ຽວກັບຜະລິດຕະພັນດັ່ງກ່າວ, ການລະບຸຂໍ້ຄວາມໃນສະຫຼາກ ຕ້ອງຊັດເຈນ, ອ່ານງ່າຍ, ເຂົ້າ ໃຈແຈ້ງ ແລະ ບໍ່ສາມາດລຶບໄດ້. ສຳລັບພາສາຕ່າງປະເທດຢູ່ໃນສະຫຼາກຕ້ອງມີເນື້ອໃນສອດຄ່ອງກັບພາສາລາວທີ່ໄດ້ກຳໄວ້ ແລະ ມີຂໍ້ຄວາມດັ່ງນີ້ :

- ຊື່ຜະລິດຕະພັນສິນຄ້າຫຸ້ມຫໍ່.
- ຊື່ ແລະ ທີ່ຢູ່ຂອງໂຮງງານ ຫຼື ບໍລິສັດ, ຜູ້ຜະລິດ, ຜູ້ຫຸ້ມຫໍ່, ຜູ້ນຳເຂົ້າ ຫຼື ຜູ້ຈຳໜ່າຍ.
- ປະລິມານທີ່ກຳນົດ (ການລະບຸປະລິມານທີ່ກຳນົດ ຕ້ອງສອດຄ່ອງກັບຫົວໜ່ວຍວັດແທກຂອງ ສປປ ລາວ ຫຼື ສາກົນ (SI) ທີ່ການົດໄວ້).
- ວັນ, ເດືອນ, ປີ, ຜະລິດ.
- ວັນ,ເດືອນ,ປີ,ໝົດອາຍຸ.
- ຂໍ້ແນະນຳການນຳໃຊ້ ແລະ ການເກັບຮັກສາ.
- ສ່ວນປະກອບທີ່ກຳນົດແຈ້ງອັດຕາສ່ວນປະກອບ.
- ຄຳເຕືອນ.

V. ການອອກໃບຢັ້ງຢືນ.

5.1 ໃບຢັ້ງຢືນການຂຶ້ນທະບຽນສິນຄ້າຫຸ້ມຫໍ່ແມ່ນອອກໃຫ້ເທື່ອດຽວໂດຍບໍ່ມີການົດ;

5.2 ໃບຢັ້ງຢືນກວດສອບສິນຄ້າຫຸ້ມຫໍ່ມີອາຍຸການນຳໃຊ້ ໜຶ່ງປີ;

VI. ຄ່າທຳນຽມ, ຄ່າບໍລິການ.

ການກວດສອບ ແລະ ຢັ້ງຢືນກາໝາຍສິນຄ້າຫຸ້ມຫໍ່ ແມ່ນຕ້ອງໄດ້ຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ອີງຕາມລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

VII. ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດ.

ຫ້າມຜູ້ດຳເນີນທຸລະກິດກຽວກັບສິນຄ້າຫຸ້ມຫໍ່ມີພຶດຕິກຳດັ່ງນີ້:

7.1 ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍສິນຄ້າຫຸ້ມຫໍ່ ທີ່ບໍ່ໄດ້ຜ່ານການກວດສອບ ແລະ ຢັ້ງຢືນຄວາມຖືກຕ້ອງຈາກອົງ ການຄຸ້ມຄອງ ແລະ ກວດສອບສິນຄ້າຫຸ້ມຫໍ່.

7.2 ຂັດຂວາງການປະຕິບັດງານຂອງເຈົ້າໜ້າທີ່ອົງການຄຸ້ມຄອງ ແລະ ກວດສອບສິນຄ້າຫຸ້ມຫໍ່ໃນການລົງກວດສອບ ແລະ ກວດກາ.

7.3 ໃຫ້ສິນບົນ, ສົມຮູ້ຮ່ວມຄິດກັບເຈົ້າໜ້າທີ່ກວດສອບ.

7.4 ປອມແປງເອກະສານການຢັ້ງຢືນກ່ຽວກັບສິນຄ້າຫຸ້ມຫໍ່.

7.5 ມີພຶດຕິກຳອື່ນທີ່ເປັນການລະເມີດຕໍ່ລະບຽບກົດໝາຍ.

VIII. ມາດຕະການຕໍ່ຜູ້ລະເມີດ.

ຜູ້ດຳເນີນທຸລະກິດທີ່ບໍ່ປະຕິບັດຕາມແຈ້ງການສະບັບນີ້ ຈະຖືກປະຕິບັດ ດັ່ງນີ້:

8.1 ຄັ້ງທຳ 01 ເຮັດໜັງສືກ່າວເຕືອນ, ເຮັດບົດບັນທຶກ ແລະ ການົດເວລາປັບປຸງພາຍໃນພາຍໃນ ສາມສິບ ວັນ.

Scanned with CamScanner

8.2 ຄັ້ງທີ 02 ຖ້າເຫັນວ່າຍັງບໍ່ປັບປຸງແມ່ນຈະໄດ້ເຮັດບົດບັນທຶກ, ໂຈ່ະໃບຢັ້ງຢືນ ແລະ ກາໝາຍຊົ່ວຄາວ ກຳນົດເວລາ ປັບປຸງພາຍໃນ ສິບຫ້າ ວັນ.

8.3 ຄັ້ງທີ 03 ຖ້າປັບປຸງແມ່ນໃຫ້ຖອນໃບຢັ້ງຢືນ ແລະ ກາໝາຍ ພ້ອມທັງປັບໃໝຕາມລະບຽບການ.

IX. ມອບໃຫ້ຂະແໜງຊັບສິນທາງປັນຍາ, ມາດຕະຖານ ແລະ ວັດແທກ ສົມທົບກັບຂະແໜງການ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ເປັນຜູ້ຈັດຕັ້ງປະຕິບັດການຄຸ້ມຄອງ ແລະ ກວດສອບສິນຄ້າຫຸ້ມຫໍ່ໃຫ້ມີປະສິດທິຜົນສູງ.

ດັ່ງນັ້ນ, ຈິ່ງແຈ້ງການມາຍັງທ່ານເພື່ອຮັບຊາບ ແລະ ພ້ອມກັນປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ.

**ຫົວໜ້າພະແນກ**

ກະຊວງອຸດສາຫະກຳແລະການຄ້າ
ພະແນກ
ອຸດສາຫະກຳແລະການຄ້າ
ແຂວງ ຈຳປາສັກ

ປອ. ບຸນຍະເດດ ທອງສະຫວັນ

Scanned with CamScanner